# ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ

ສອນເພັດ ວໍລະວົງເພັດ[1], ຄາກ້ຽວ ພັນດາວົງ[2]
ສະຖາບັນການທະນາຄານ

## ບົດຄັດຫຍໍ້

ໃນການສຶກສາຄົ້ນຄວ້າ ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ເຊິ່ງຜົນການຄົ້ນຄ້ວາ ມີຈຸດປະສົງຄື : ເພື່ອສຶກສາປັດໄຈສ່ວນບຸກຄົນທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ແລະ ເພື່ອສຶກສາລະດັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ

ໂດຍກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນ ກຸ່ມພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ຈຳນວນ 110 ຄົນ ແລະ ໃນການສຶກສາຄັ້ງນີ້ໄດ້ໃຊ້ວິທີ ການສຸ່ມຕົວຢ່າງການສຸ່ມແບບແບ່ງຊັ້ນ (Stratified Random Sampling) ໂດຍໃຊ້ສັດສ່ວນ (Proportional allocation). ເຊິ່ງໄດ້ນຳໃຊ້ໂປຣແກມ SPSS ເປັນເຄື່ອງມືທີ່ຊ່ວຍໃນການວິເຄາະຂໍ້ມູນຢ່າງລະອຽດເຊັ່ນ: ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ. ພົບວ່າສ່ວນໃຫຍ່ເປັນເພດຊາຍ, ມີອາຍຸລະຫວ່າງ 31-41 ປີ, ມີລະດັບການສຶກສາປະລິນຍາຕີ, ຈົບການສຶກສາຈາກສາຂາການບັນຊີ, ໄລຍະເວລາເຮັດວຽກ 7 ປີຂຶ້ນໄປ, ມີລາຍໄດ້ສະເລ່ຍຕໍ່ເດືອນ 5-10 ລ້ານກີບ, ເຊິ່ງພະນັກງານສ່ວນໃຫຍ່ຍັງບໍ່ທັນໄດ້ຮຽນຫຼັກສູດ CPA (Certificate Public Accountant), ສ່ວນໃຫຍ່ແມ່ນເຮັດວຽກຢູ່ທະນາຄານພັດທະນາລາວ, ຈຳນວນມື້ເຮັດວຽກ 5 ມື້ຕໍ່ອາທິດ, ຈຳນວນຊົ່ວໂມງເຮັດວຽກຕ່ຳກວ່າ 48 ຊົ່ວໂມງ ແລະ ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນບໍ່ເຄີຍເຮັດວຽກຢູ່ບ່ອນອື່ນມາກ່ອນທີ່ຈະເຂົ້າເຮັດວຽກເປັນພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ.

ຈາກຜົນການສຶກສາເຫັນໄດ້ວ່າ: ໃນການວິເຄາະລະດັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ໂດຍນຳໃຊ້ຄ່າສະເລ່ຍໃນການວິເຄາະຂໍ້ມູນ ທາງດ້ານຄວາມຮູ້ໃນວິຊາຊີບບັນຊີ, ທັກສະທາງວິຊາຊີບບັນຊີ, ຈັນຍາບັນວິຊາຊີບບັນຊີ, ທັດສະນະຄະຕິໃນວິຊາຊີບບັນຊີ, ການບໍລິຫານງານຂອງອົງກອນ, ແລະ ປະສິດທິພາບໃນການໃນການເຮັດບັນຊີ ແລະ ເຫັນໄດ້ວ່າມີລະດັບທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຫຼາຍ ເຊິ່ງປັດໄຈທີ່ມີລະດັບທີ່ສົ່ງຜົນໃນການເຮັດບັນຊີໃຫ້ມີປະສິດທິພາບຫຼາຍກວ່າໝູ່ໄດ້ແກ່ ປັດໄຈດ້ານຈັນຍາບັນວິຊາຊີບບັນຊີ, ຮອງລົງມາແມ່ນດ້ານ ການບໍລິຫານງານຂອງອົງກອນ, ທັດສະນະຄະຕິໃນວິຊາຊີບບັນຊີ,ດ້ານຄວາມຮູ້ໃນວິຊາຊີບບັນຊີ, ດ້ານທັກສະທາງວິຊາຊີບບັນຊີ ແລະ ປັດໄຈທີ່ມີຜົນໜ້ອຍສຸດຄື ປະສິດທິພາບໃນການໃນການເຮັດບັນຊີ.

---

[1] ສະຖາບັນການທະນາຄານ

[2] ສະຖາບັນການທະນາຄານ

# Factors affecting the efficiency of accounting staff
# Commercial banks in Vientiane


## Abstract

Study on the factors that affect to the effectiveness of the commercial bank's accountants in accounting tasks aimed at testing on the factors of the individual and entity that lead to the effectiveness of accounting tasks which are performed by the commercial bank's accountants in Vientiane Capital.

A set of randomly selected samples on this research is targeted to a group of accountants working in the commercial banks which included 110 people. In randomly selected samples are selected by stratified Random Sampling in a way of classifying the sample as proportional allocation which is done by SPSS in substantial data analysis in a form of percentage, means, standard deviation. Majority of those who responded to this research project is male at large, their ages are ranked between 31-41 years, qualification is up to bachelor's degree, majored in accounting, at least 7-year-working experience. Most of them earned approximately 5-10 million per month. However, those respondents have not yet received qualified CPA and mostly are working with the commercial bank where working hours are fixed at 5 days a week, working hours less than 48 hours. Many of the respondents have never worked at other workplace before joining the banking industry.

From the study on this research on level of sensitivity analysis to use on average in term of analyzing the impact and the effectiveness of the commercial bank's accountants, used the analysis in analyzing the professional knowledge in accountancy, accounting technical skill, professionals in accounting field, accountancy ethics, perspective on the accounting professionals, and accountancy management are seen to be at a significant level at first that is affecting to the effectiveness of accountancy at large rather than others, for instance the professional code of conduct and ethics . Secondly accountancy management, perspective of accountancy and professional skills and the last is the factor of technical skills in accounting.

## I. ພາກສະເໜີ

ໃນສະພາບເສດຖະກິດທີ່ກຳລັງຂະຫຍາຍຕົວຂຶ້ນ ການເພີ່ມຂຶ້ນຂອງພົນລະເມືອງ ແລະ ສິ່ງຕ່າງໆທີ່ເປັນສາເຫດ ເຮັດໃຫ້ການດຳເນີນທຸລະກິດແມ່ນມີການແຂ່ງຂັນກັນສູງ ຍ້ອນຄວາມກ້າວຫນ້າທາງດ້ານເສດຖະກິດ-ສັງຄົມ ແລະ ເຕັກໂນໂລຊີ ເຮັດໃຫ້ເສດຖະກິດ-ສັງຄົມ ຂອງທົ່ວໂລກມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ເຮັດໃຫ້ເສດຖະກິດມີຄວາມເຂັ້ມແຂງເປັນກ້າວໆ ແລະ ກ້າວໄປສູ່ກົນໄກເສດຖະກິດໃຫມ່ໂດຍມີທ່າອ່ຽງຂະຫຍາຍຕົວດີຂຶ້ນ.

ໃນປັດຈຸບັນວຽກງານທາງດ້ານການບໍລິການ ແມ່ນມີຄວາມສຳຄັນຕໍ່ກັບການຂະຫຍາຍຕົວ ຂອງເສດຖະກິດໃນທຸກຂົງເຂດເສດຖະກິດ ຂອງປະເທດຕ່າງໆໃນໂລກເວົ້າລວມ, ເວົ້າສະເພາະແມ່ນ ສ ປ ປ ລາວ ເມື່ອມີການເປີດກ້ວາງເຂດເສລີການຄ້າເຮັດໃຫ້ເສດຖະກິດໂລກແກ່ດຶງໄປສູ່ເສດຖະກິດທີ່ມີການບໍລິການເປັນພື້ນຖານທີ່ສຳຄັນຫຼາຍ ສຳລັບອົງການຈັດຕັ້ງຕ່າງໆການໃຫ້ບໍລິການແມ່ນປັດໃຈສຳຄັນທີ່ສຸດເພາະວ່າການບໍລິການໄດ້ເປັນເຄື່ອງມື ທີ່ຜູກມັດລູກຄ້າເອົາໄວ້ໃນໄລຍະຍາວ ເນື່ອງຈາກສິນຄ້າຄ້າຍຄືກັນແຕ່ການບໍລິການທີ່ສ້າງຄວາມປະທັບໃຈຫຼາຍກວ່າແມ່ນສິ່ງທີ່ຍາກທີ່ສຸດທີ່ຈະເຮັດຄືກັນໄດ້.

ນອກຈາກນີ້, ວຽກງານດ້ານການບໍລິການຂອງທະນາຄານທຸລະກິດ ແມ່ນມີຄວາມສຳຄັນ ແລະ ຊ່ວຍປະກອບສ່ວນໃນການສ້າງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ. ພ້ອມທັງມີຫນ້າທີ່ສ້າງເງິນດ້ວຍການລະດົມເງິນຝາກ, ໃຫ້ສິນເຊື່ອ ແລະ ການບໍລິການລູກຄ້າທີ່ມີຄວາມເພິ່ງພໍໃຈສູງສຸດ. ດ້ວຍເຫດນັ້ນ ການບໍລິການຂອງບັນດາທະນາຄານທຸລະກິດ ຈຶ່ງໄດ້ຮັບການເອົາໃຈໃສ່ພັດທະນາຫຼາຍຂຶ້ນ. ເນື່ອງຈາກປະເທດເຮົາເປັນປະເທດກຳລັງພັດທະນາ ພັກ-ລັດ ໄດ້ມີການເປີດກວ້າງການລົງທຶນ. ຕໍ່ກັບສະພາບການດັ່ງກ່າວທີ່ສຳຄັນຕໍ່ລະບົບເສດຖະກິດ ທັງມີບົດບາດໃນການພັດທະນາເສດຖະກິດ-ສັງຄົມ ບັນດາທະນາຄານທຸລະກິດ ເປັນທະນາຄານທີ່ດຳເນີນທຸລະກິດໃຫ້ການບໍລິການຢູ່ ສປປ ລາວ ເຊິ່ງບັນດາທະນາຄານທຸລະກິດ ທີ່ອົງກອນທຸລະກິດຈະປະສົບຜົນສຳເລັດໄດ້ນັ້ນ ບໍ່ໄດ້ອາໄສພຽງແຕ່ຄວາມສາມາດໃນການເຂົ້າເຖິງແຫຼ່ງທຶນພຽງຢ່າງດຽວ ແຕ່ສິ່ງສຳຄັນອີກຢ່າງໜຶ່ງທີ່ເຮັດໃຫ້ອົງກອນປະສົບຜົນສຳເລັດ ຕາມຈຸດປະສົງທີ່ວາງໄວ້ໄດ້ ກໍ່ຄືປະສິດທິພາບໃນການປະຕິບັດງານຂອງພະນັກງານໃນອົງກອນ, ເນື່ອງຈາກການປະຕິບັດງານທຸກຮູບແບບລ້ວນແຕ່ມີປັດໄຈທີ່ສົ່ງຜົນກະທົບຕໍ່ການປະຕິບັດງານ ບໍ່ວ່າຈະເປັນເລື່ອງຄວາມກົດດັນໃນການເຮັດວຽກ, ບັນຍາກາດໃນບ່ອນເຮັດວຽກ, ການແຂ່ງຂັນທັງພາຍໃນ-ພາຍນອກອົງກອນ ແລະ ສະພາບແວດລ້ອມທາງເສດຖະກິດທີ່ມີການປ່ຽນແປງຢູ່ຕະຫຼອດເວລາ.

ຫຼາຍໆອົງກອນມີການປັບປ່ຽນລະບົບປະຕິບັດງານໃຫ້ມີປະສິດທິພາບ ໂດຍການປັບໂຄງສ້າງອົງກອນ ລວມໄປເຖິງການປ່ຽນແປງອັດຕາກຳລັງຄົນຂອງອົງກອນໃຫ້ຫຼຸດໜ້ອຍລົງເນື່ອງມາຈາກພາວະເສດຖະກິດຕົກຕໍ່າ ພະນັກງານບັນຊີຈຶ່ງເປັນສ່ວນໜຶ່ງຂອງອົງກອນທີ່ຈະເຮັດໃຫ້ຜູ້ບໍລິຫານຮູ້ເຖິງຜົນການດຳເນີນງານ ແລະ ຖານະການເງິນຂອງກິດຈະການ ເພື່ອນຳຂໍ້ມູນທາງການເງິນໄປວາງແຜນໃນການດຳເນີນງານ ແລະ ຈັດເຮັດງົບປະມານຕ່າງໆໃນອະນາຄົດໄດ້ ເຊິ່ງຂໍ້ມູນທາງບັນຊີທີ່ນຳສະເໜີຕໍ່ຜູ້ບໍລິຫານຕ້ອງມີຄວາມຖືກຕ້ອງ, ເຊື່ອຖືໄດ້ ສາມາດໃຊ້ໃນການຕັດສິນໃຈຕ່າງໆໄດ້ທັນເວລາ. ຫາກການປະຕິບັດວຽກງານຂອງພະນັກງານບັນຊີບໍ່ມີປະສິດທິພາບ ແລະ ປະສິດທິຜົນ ຕາມທີ່ອົງກອນຕ້ອງການ ກໍ່ອາດຈະພາໃຫ້ເກີດບັນຫາຕ່າງໆ ແລະ ແກ້ໄຂໄດ້ບໍ່ທັນເວລາ.

ນັກບັນຊີຖືວ່າເປັນອາຊີບໜຶ່ງທີ່ຕ້ອງອາໄສຄວາມຮູ້, ຄວາມສາມາດສະເພາະທາງດ້ານ

ການບັນຊີ ເປັນບຸກຄົນທີ່ໄດ້ຜ່ານການສອບເສັງ ຮັບຮອງຈາກສະຖາບັນວິຊາຊີບດ້ານບັນຊີໂດຍສະເພາະ ຈິ່ງເກີດມີຄວາມຊ່ຽວຊານ ມີປະສົບການ ແລະ ຄວາມຊໍານານສະເພາະທາງໃນວິຊາຊີບບັນຊີ ຕາມທີ່ໄດ້ສຶກສາມາ ແລະ ນອກຈາກນັ້ນ, ກໍຍັງຕ້ອງໄດ້ອາໄສປະສົບການໂດຍກົງຈາກການປະຕິບັດວຽກງານບັນຊີຕົວຈິງ ຖ້າມີປະສົບການໃນການເຮັດວຽກບັນຊີຫຼາຍ, ມີຄວາມຮູ້, ຄວາມຊ່ຽວຊານໃນວິຊາຊີບ ກໍຈະຊ່ວຍໃຫ້ພະນັກງານສາມາດວິເຄາະ, ພິຈາລະນາ, ແຍກລາຍການ ແລະ ບັນທຶກບັນຊີໄດ້ຢ່າງຖືກຕ້ອງຄົບຖ້ວນມີປະສິດທິພາບ ແລະ ໜ້າເຊື່ອຖືໄດ້ຫຼາຍກວ່າຜູ້ທີ່ມີປະສົບການໜ້ອຍ ເຊິ່ງນອກຈາກຄວາມຮູ້ທາງດ້ານບັນຊີແລ້ວ ນັກບັນຊີຍັງຕ້ອງພັດທະນາຄວາມຮູ້ດ້ານອື່ນໆທີ່ກ່ຽວຂ້ອງກັບວິຊາຊີບບັນຊີໃຫ້ຫຼາຍຂຶ້ນ ບໍ່ວ່າຈະເປັນດ້ານທັກສະ ແລະ ຄວາມສາມາດຂອງຕົນເຂົ້າໃນການເຮັດບັນຊີຢ່າງເຕັມສ່ວນ, ມີຄວາມຊື່ສັດ, ບໍ່ຄິດຄົດໂກງ ຫຼື ບໍ່ເຜີຍແຜ່ຂໍ້ມູນຄວາມລັບໃນທະນຄານໃຫ້ບຸກຄົນພາຍນອກຮັບຮູ້, ມີຈັນຍາບັນໃນການປະຕິບັດໜ້າທີ່ ແລະ ທີ່ສໍາຄັນຕ້ອງມີທັດສະນະຄະຕິທີ່ດີຕໍ່ອົງກອນ ໃນທາງດຽວກັນທະນາຄານຫຼື ອົງກອນທຸລະກິດກໍຄວນມີການເສີມສ້າງແຮງຈູງໃຈໃນການປະຕິບັດງານໃຫ້ແກ່ພະນັກງານເຊັ່ນ: ການໃຫ້ຄ່າຕອບແທນແກ່ພະນັກງານໃນອັດຕາທີ່ເໝາະສົມ, ພິຈາລະນາຂຶ້ນເງິນເດືອນໃຫ້ພະນັກງານ, ມີສະຫວັດດີການຕ່າງໆ, ສ້າງກິດຈະກໍາກະຊັບຄວາມສໍາພັນຂອງພະນັກງານໃນອົງກອນເປັນຕົ້ນ. ຈາກເຫດຜົນດັ່ງກ່າວ, ພວກຂ້າພະເຈົ້າຈຶ່ງມີຄວາມສົນໃຈສຶກສາໃນຫົວຂໍ້ກ່ຽວກັບ **"ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີ ບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ"** ເພາະຫາກຮູ້ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດໄດ້ແລ້ວ, ກໍຈະເປັນແນວທາງໃນການພັດທະນາຄວາມຮູ້ຄວາມສາມາດໃນການເຮັດບັນຊີຂອງພະນັກງານບັນຊີ, ສ້າງຊັບພະຍາກອນບຸກຄົນໃຫ້ກັບບັນດາທະນຄານທຸລະກິດ ແລະ ເພີ່ມຄວາມໄດ້ປຽບໃນການແຂ່ງຂັນ ເພື່ອການຈະເລີນເຕີບໂຕຂອງບັນດາພາກສ່ວນເສດຖະກິດ ແລະ ຄວາມ ໝັ້ນຄົງຂອງປະເທດຕໍ່ໄປໃນອະນາຄົດ.

### ທິດສະດີ ແລະ ບົດຄົ້ນຄ້ວາວິທະຍາສາດທີ່ກ່ຽວຂ້ອງ

ໃນບົດຄົ້ນຄວ້ານີ້ໄ້ດ້ນໍາໃຊ້ທິດສະດີຫຼາຍທິດສະດີເຂົ້າມາເປັນບ່ອນອີງໃນການຄົ້ນຄວ້າເຊັ່ນ : ແນວຄິດກ່ຽວກັບຫຼັກການບັນຊີ, ແນວຄິດກ່ຽວກັບນັກບັນຊີ, ແນວຄິດກ່ຽວກັບປະສິດທິພາບໃນການເຮັດບັນຊີ, ແນວຄິດກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີ ແລະ ຈາກການຄົ້ນຄວ້າບັນດາບົດຄົ້ນຄວ້າທີ່ກ່ຽວຂ້ອງຜ່ານມາເຫັນວ່າບັນດາບົດຄົ້ນຄວ້າສ່ວນຫຼາຍແມ່ນຄົ້ນຄວ້າຂອງຕ່າງປະເທດເຊັ່ນ : ແຄດທະລີຢາ ວັນວົງ (2021) ໄດ້ສຶກສາປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການປະຕິບັດງານຂອງນັກບັນຊີໃນກຸງເທບມະຫານະຄອນ ການສຶກສາໃນຄັ້ງນີ້ມີຈຸດປະສົງເພື່ອ 1) ສຶກສາບົດບາດຂອງນັກບັນຊີ 2) ສຶກສາຄຸນລັກສະນະຂອງນັກບັນຊີ 3) ສຶກສາຄຸນສົມບັດຂອງນັກບັນຊີ ໃນກຸງເທບມະຫານະຄອນ, ຈຸລາລັດ ສັດໄຊ (2020) ໄດ້ສຶກສາປະສິດທິພາບໃນການປະຕິບັດງານບໍລິສັດເອກະຊົນໃນກຸງເທບມະຫານະຄອນ, ສີລິຂວັນ ພົນວິຈິດ (2019) ໄດ້ສຶກສາກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງເຈົ້າໜ້າທີ່ຝ່າຍການເງິນ-ການບັນຊີ ໜ່ວຍງານລາຊະການ ເຂດພື້ນທີ່ກຸງເທບມະຫານະຄອນ ການສຶກສາມີຈຸດປະສົງເພື່ອສຶກສາກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງເຈົ້າໜ້າທີ່ຝ່າຍການເງິນ-ການບັນຊີ ໜ່ວຍງານລາຊະການ ເຂດພື້ນທີ່ກຸງເທບມະຫານະຄອນ 4 ດ້ານຄື: ດ້ານຄຸນສົມບັດ, ດ້ານສະພາບແວດລ້ອມການປະຕິບັດງານ, ດ້ານຜົນຕອບແທນການປະຕິບັດງານ ແລະ ດ້ານກົດໝ

າຍ, ລະບຽບ, ຂໍ້ບັງຄັບ. ການເກັບຂໍ້ມູນແມ່ນໃຊ້ການແຈກຢາຍແບບສອບຖາມ ໃຫ້ກຸ່ມຕົວຢ່າງທີ່ເປັນເຈົ້າໜ້າທີ່ຝ່າຍການເງິນ-ການບັນຊີ ໜ່ວຍງານລາຊະການ ເຂດພື້ນທີ່ກຸງເທບມະຫານະຄອນ ຈຳນວນ 152 ຄົນ ໂດຍໃຊ້ໂປຣແກມສຳເລັດຮູບທາງສະຖິຕິໃນການວິເຄາະຂໍ້ມູນ ຈາກຜົນການສຶກສາສະຫຼຸບໄດ້ວ່າ ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງເຈົ້າໜ້າທີ່ຝ່າຍການເງິນ-ການບັນຊີ ໜ່ວຍງານລາຊະການ ເຂດພື້ນທີ່ກຸງເທບມະຫານະຄອນ, ກະສະມາພອນ ຍັງສິ້ມປ່ອຍ (2018) ສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການປະຕິບັດວຽກງານຂອງຜູ້ເຮັດບັນຊີວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SME) ໃນເຂດກຸງເທບມະຫານະຄອນ, ອັນລິບ ວັນນະໂອສິດ (2018) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງນັກບັນຊີເອກະຊົນໃນເຂດກຸງເທບມະຫານະຄອນ ການສຶກສາຄັ້ງນີ້ມີຈຸດປະສົງເພື່ອສຶກສາດ້ານປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງນັກບັນຊີເອກະຊົນໃນເຂດກຸງເທບມະຫານະຄອນ, ພິມພິສາ ວັນນະວິຈິດ (2017) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີ ຂອງກຸ່ມອອມຊັບເພື່ອການຜະລິດໃນແຂວງມະຫາສາລະຄາມ, ເສົາວະລັກ ກິ່ມສ້າງ (2017) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນທຸລະກິດອະສັງຫາລິມະຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບແຫ່ງປະເທດໄທ ໂດຍມີວັດຖຸປະສົງເພື່ອສຶກສາລະດັບປັດໄຈທີ່ມີອິດທິພົນຂອງຄວາມຮູ້ໃນວິຊາຊີບ, ທັກສະທາງວິຊາຊີບ, ຈັນຍາບັນທາງວິຊາຊີບ ແລະ ທັດສະນະຄະຕິໃນວິຊາຊີບທີ່ສົ່ງຜົນຕໍ່ ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນທຸລະກິດອາສັງຫາລິມະຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບແຫ່ງປະເທດໄທ. ການສຶກສາຄົ້ນຄວ້າຄັ້ງນີ້ເປັນການສຶກສາຄົ້ນຄວ້າແບບປະລິມານ ເຊິ່ງໃຊ້ແບບສອບຖາມທີ່ຜູ້ສຶກສາສ້າງຂຶ້ນເພື່ອເປັນເຄື່ອງມືໃນການເກັບກຳຮວບຮວມຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄວ້າປະກອບມີ ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າຜັນປ່ຽນມາດຕະຖານ.

**ວິທີຄົ້ນຄວ້າ**

ການອອກແບບການສຶກສາ, ການຄັດເລືອກພື້ນທີ່ ແລະ ໄລຍະເວລາການຄົ້ນຄວ້າ

ວິທີການສຶກສານີ້ ເປັນການສຶກສາແບບປະລິມານ (Quantitative Research) ໂດຍນຳໃຊ້ແບບສອບຖາມທີ່ໄດ້ຈາກການລົງໄປເກັບຂໍ້ມູນຕົວຈິງໃນບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ກຳລະນີສຶກສາແມ່ນເອົາ 15 ທະນາຄານ, ຫຼັງຈາກນັ້ນນຳເອົາຂໍ້ມູນທີ່ໄດ້ມານັ້ນມາວິເຄາະລະດັບທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ດັ່ງກ່າວ.

ການຄົ້ນຄວ້າໃນຄັ້ງນີ້ໄດ້ເນັ້ນໃສ່ **3** ດ້ານ ດັ່ງນີ້:

ການອອກແບບການຄົ້ນຄວ້າ

ການສຶກສາຄັ້ງນີ້ຈະເປັນການເກັບກຳຂໍ້ມູນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ (ສ້າງແບບສອບຖາມ ແລະ ຢາຍແບບສອບຖາມຜ່ານຊ່ອງທາງອອນລາຍໃຫ້ບັນດາພະນັກງານທີ່ເຮັດບັນຊີໃນທະນາຄານທຸລະກິດ)

➢ ການຄັດເລືອກພື້ນທີ່

ປະຈຸບັນປະກອບທັງໝົດມີ 38 ທະນາຄານ ແລະ ໄດ້ຄັດເລືອກເອົາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ 15 ທະນາຄານ ເປັນຕົວແທນຄືດັ່ງນີ້:

❖ ກຸ່ມທະນາຄານທຸລະກິດລັດ

**1)** ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

ກຸ່ມທະນາຄານສະເພາະ (Specialized Bank)

**2)** ທະນາຄານນະໂຍບາຍ

NAYOBY BANK

ກຸ່ມທະນາຄານທຸລະກິດລັດຮ່ວມທຶນ (Joint State Comercial Bank)

**3)** ທະນາຄານ ພັດທະນາລາວ ຈຳກັດ

LAO DEVELOPMENT BANK CO.,LTD

**4)** ທະນາຄານ ສົ່ງເສີມກະສິກຳ ຈຳກັດ

AGRICULTURAL PRROMOTION BANK CO., LTD

**5)** ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ

LAO-VIET BANK CO.,LTD

ກຸ່ມທະນາຄານເອກະຊົນ (Private Bank)

**6)** ທະນາຄານຮ່ວມພັດທະນາ

JOINT DEVELOPMENT BANK

**7)** ທະນາຄານພົງສະຫວັນ ຈຳກັດ

PHONGSAVANH BANK LTD

**8)** ທະນາຄານອິນໂດຈີນ ຈຳກັດ

INDOCHINA BANK LTD

**9)** ທະນາຄານ ເອັສທີ ຈຳກັດ

ST BANK LTD

ກຸ່ມທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງ ທ/ຄ ຕ່າງປະເທດ (Subsidiary Bank)

**10)** ທະນາຄານເອຊີລີດາລາວ ຈຳກັດ

ACLEDA BANK LAO.,LTD

11) ທະນາຄານ ໄຊ່ງ່ອນເທື່ອງຕິ່ນ ລາວ ຈຳກັດຜູ້ດຽວ

SAIGON THUONG TIN BANK LAO SOLE CO.,LTD

12) ທະນາຄານ ຫວຽດຕິນ ລາວ ຈຳກັດ

VIETIN BANK LAO LIMITED

13) ທະນາຄານ ການຄ້າຕ່າງປະເທດ ຫວຽດນາມ ປະຈຳລາວ ຈຳກັດ

VIETCOM BANK LAOS LIMITED

14) ທະນາຄານ ກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ

BANK OF AYUDHYA PCL., VIENTIANE BRANCH

15) ທະນາຄານ ຫຸ້ນສ່ວນການຄ້າທະຫານ ສາຂາລາວ

MILITARY COMMERCIAL JOINT STOCK BANK - LAO BRANCH

ທະນາຄານທີ່ກ່າວມາຂ້າງເທິງນັ້ນເປັນບ່ອນທີ່ໃຊ້ໃນການສຶກສາຄົ້ນຄວ້າ ແລະ ລົງເກັບຂໍ້ມູນຕົວຈິງ ເຊິ່ງຈະເນັ້ນໃສ່ສະເພາະພະນັກງານບັນຊີ ທີ່ເຮັດບັນຊີຢູ່ທະນາຄານທຸລະກິດ ເປັນກໍລະນີສຶກສາ.

**ປະຊາກອນ ແລະ ກຸ່ມຕົວຢ່າງ**

**ປະຊາກອນ**

ປະຊາກອນທີ່ຈະໃຊ້ໃນການສຶກສາຄັ້ງນີ້ ໄດ້ແກ່ພະນັກງານບັນຊີທັງໝົດຈຳນວນ 150 ຄົນ ທີ່ເຮັດບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ

**ກຸ່ມຕົວຢ່າງ**

ກຸ່ມປະຊາກອນທີ່ນຳມາສຶກສາໄດ້ແກ່ພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ຈຳນວນ 110 ຄົນ ໂດຍໄດ້ມາຈາກການນຳໃຊ້ສູດຂອງ Taro Yamane ໃນການຄຳນວນຫາກຸ່ມຕົວຢ່າງທີ່ເໝາະສົມດັ່ງນີ້:

$$n = \frac{N}{[1+(Ne^2)]}$$

ກຳນົດ: $n$ ຈຳນວນຂະໜາດຂອງ ຕົວຢ່າງ

$N$ ຂະໜາດຂອງປະຊາກອນ

$e$ ຄວາມຄາດເຄື່ອນຂອງກຸ່ມຕົວຢ່າງ (ລະດັບຄວາມເຊື່ອໝັ້ນ 0.05)

ແທນຄ່າສູດ:

$$n = \frac{150}{[1 + (150(0.05)^2)]} = 109.090 = 110$$

ວິທີການສຸ່ມຕົວຢ່າງ

ການສຸ່ມຕົວຢ່າງສຳລັບການສຶກສາໃນຄັ້ງນີ້ ຜູ້ສຶກສາໄດ້ກຳນົດການເລືອກຕົວຢ່າງການສຸ່ມແບບແບ່ງຊັ້ນ (Stratified Random Sampling) ໂດຍໃຊ້ສັດສ່ວນ (Proportional allocation) ກໍຄືການໃຫ້ຈຳນວນກຸ່ມຕົວຢ່າງໃນແຕ່ລະຊັ້ນເປັນສັດສ່ວນເທົ່າກັນກັບຈຳນວນພະນັກງານບັນຊີຈາກແຕ່ລະທະນາຄານດັ່ງນີ້:

ຫົວໜ່ວຍ: ຄົນ

| ລຳດັບ | ຊື່ບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ | ຈຳນວນພະນັກງານບັນຊີ | ຈຳນວນກຸ່ມຕົວຢ່າງ |
|---|---|---|---|
| 1 | ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 37 | 20 |
| 2 | ທະນາຄານນະໂຍບາຍ | 9 | 3 |
| 3 | ທະນາຄານພັດທະນາລາວ ຈຳກັດ | 26 | 26 |
| 4 | ທະນາຄານ ສົ່ງເສີມກະສິກຳ ຈຳກັດ | 8 | 8 |
| 5 | ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ | 3 | 3 |
| 6 | ທະນາຄານ ຮ່ວມພັດທະນາຄານ | 5 | 3 |
| 7 | ທະນາຄານ ພົງສະຫັວນ ຈຳກັດ | 5 | 1 |
| 8 | ທະນາຄານ ອິນໂດຈີນ ຈຳກັດ | 7 | 3 |
| 9 | ທະນາຄານ ເອັສທີ ຈຳກັດ | 24 | 24 |
| 10 | ທະນາຄານ ເອຊີລິດາລາວ ຈຳກັດ | 6 | 6 |
| 11 | ທະນາຄານ ໄຊງ່ອນເທື່ອງຕິ່ນ ລາວ ຈຳກັດ | 7 | 5 |
| 12 | ທະນາຄານ ຫວຽດຕິນ ລາວ ຈຳກັດ | 5 | 2 |
| 13 | ທະນາຄານ ການຄ້າຕ່າງປະເທດຫວຽດນາມ ປະຈຳລາວ ຈຳກັດ | 3 | 2 |
| 14 | ທະນາຄານ ກຸງສີອະຍຸດທະຍາ ຈຳກັດ(ມະຫາຊົນ) ສາຂານະຄອນຫຼວງວຽງຈັນ | 2 | 2 |
| 15 | ທະນາາຄານ ຫຸ້ນສ່ວນການຄ້າທະຫານ ສາຂາລາວ | 3 | 2 |
| ລວມທັງໝົດ | | 150 | 110 |

**ຜົນການຄົ້ນຄວ້າ ແລະ ການອະພິປາຍ**

ຜົນການຄົ້ນຄວ້າ ປັດໄຈດ້ານຄວາມຮູ້ໃນວິຊາຊີບບັນຊີທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສົ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍ ເຊິ່ງລະດັບທີ່ສົ່ງຜົນຫຼາຍກ່ວາໝູ່ ໄດ້ແກ່ ມີຄວາມຮູ້ດ້ານການບັນທຶກບັນຊີເປັນຢ່າງດີ, ຮອງລົງມາແມ່ນ ສາມາດໃຊ້ຄວາມຮູ້ໄຈ້ແຍກ, ພິຈາລະນາລາຍຮັບ ແລະ ລາຍຈ່າຍຂອງທຸລະກິດໄດ້ເປັນຢ່າງດີ ແລະ ລະດັບທີ່ສົ່ງຜົນໜ້ອຍທີ່ສຸດຄື ໄດ້ຮັບການເຝິກອົບຮົມຄອມພິວເຕີກ່ຽວກັບການບັນທຶກບັນຊີ.

ຈາກການສຶກສາຂໍ້ມູນຈາກແບບສອບຖາມຈຳນວນ 110 ຕົວຢ່າງ ໂດຍລວມແລ້ວພົບວ່າປະຊາກອນກຸ່ມຕົວຢ່າງຜູ້ຕອບແບບສອບຖາມສ່ວນໃຫຍ່ເປັນເພດຊາຍກວມເອົາ 60.9 ສ່ວນຮ້ອຍ, ມີອາຍຸລະຫວ່າງ 31-40 ປີ ແມ່ນກວມເອົາຈຳນວນ 53.6 ສ່ວນຮ້ອຍ, ໂດຍສ່ວນໃຫຍ່ມີລະດັບການສຶກສາປະລິນຍາຕີ ກວມເອົາ 75.5 ສ່ວນຮ້ອຍ, ຈົບການສຶກສາຈາກສາຂາການບັນຊີ ກວມເອົາ 30 ສ່ວນຮ້ອຍເຊິ່ງເປັນຈຳນວນຫຼາຍທີ່ສຸດຂອງກຸ່ມຕົວຢ່າງ, ໄລຍະເວລາເຮັດວຽກ 7 ປີຂຶ້ນໄປ ກວມເອົາ 57.3 ສ່ວນຮ້ອຍ, ຜູ້ຕອບແບບສອບຖາມສ່ວນໃຫຍ່ມີລາຍໄດ້ສະເລ່ຍຕໍ່ເດືອນ 5-10 ລ້ານກີບ ກວມເອົາ 44.5 ສ່ວນຮ້ອຍ, ເຊິ່ງພະນັກງານບັນຊີສ່ວນໃຫຍ່ຍັງບໍ່ໄດ້ຮຽນຫຼັກສູດ CPA ( Certificate Public Accountant) ກວມເອົາ 81.8 ສ່ວນຮ້ອຍ ແລະ ຜູ້ຕອບແບບສອບຖາມສ່ວນໃຫຍ່ມາຈາກ ທະນາຄານການຄ້າພັດທະນາລາວ ຈຳກັດ ກວມເອົາ 23.6 ສ່ວນຮ້ອຍ, ຈຳນວນມື້ເຮັດວຽກ 5 ມື້ ກວມເອົາ 90.0 ສ່ວນຮ້ອຍ, ຈຳນວນຊົ່ວໂມງເຮັດວຽກຕໍ່ກວ່າ 48 ຊົ່ວໂມງ ກວມເອົາ 69.1 ສ່ວນຮ້ອຍ, ແລະ ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນບໍ່ເຄີຍເຮັດວຽກຢູ່ບ່ອນອື່ນມາກ່ອນທີ່ຈະເຂົ້າເຮັດວຽກເປັນພະນັກງານບັນຊີໃນບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ກວມເອົາ 63.6 ສ່ວນຮ້ອຍ.

❖ **ປັດໄຈດ້ານຄວາມຮູ້ໃນວິຊາຊີບບັນຊີ**

ໃນການວິເຄາະປັດໄຈດ້ານຄວາມຮູ້ໃນວິຊາຊີບບັນຊີທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສົ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍ ເຊິ່ງລະດັບທີ່ສົ່ງຜົນຫຼາຍກ່ວາໝູ່ ໄດ້ແກ່ ມີຄວາມຮູ້ດ້ານການບັນທຶກບັນຊີເປັນຢ່າງດີ, ຮອງລົງມາແມ່ນ ສາມາດໃຊ້ຄວາມຮູ້ໄຈ້ແຍກ, ພິຈາລະນາລາຍຮັບ ແລະ ລາຍຈ່າຍຂອງທຸລະກິດໄດ້ເປັນຢ່າງດີ ແລະ ລະດັບທີ່ສົ່ງຜົນໜ້ອຍທີ່ສຸດຄື ໄດ້ຮັບການເຝິກອົບຮົມຄອມພິວເຕີກ່ຽວກັບການບັນທຶກບັນຊີ.

❖ **ປັດໄຈດ້ານທັກສະທາງວິຊາຊີບບັນຊີ**

ໃນການວິເຄາະປັດໄຈດ້ານທັກສະໃນວິຊາຊີບບັນຊີທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສົ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍ ເຊິ່ງລະດັບທີ່ສົ່ງຜົນຫຼາຍກ່ວາໝູ່ໄດ້ແກ່ ມີການຈັດລຳດັບຄວາມສຳຄັນຂອງວຽກງານໄດ້ເປັນຢ່າງດີ, ຮອງລົງມາແມ່ນ ແກ້ໄຂບັນຫາໃນການປະຕິບັດງານ,ສາມາດໃຫ້ຄຳແນະນຳໃນການປະຕິບັດວຽກງານບັນຊີຕາມລະບຽບໃຫ້ຝ່າຍບໍລິຫານໄດ້, ແລະ ລະດັບທີ່ສົ່ງຜົນໜ້ອຍທີ່ສຸດຄື ມີຄວາມຄ່ອງແຄ້ວໃນການປະຕິບັດງານເຈລະຈາກັບພະແນກຕ່າງໆໄດ້ເປັນຢ່າງດີ.

❖ **ປັດໄຈດ້ານຈັນຍາບັນວິຊາຊີບບັນຊີ**

ໃນການວິເຄາະປັດໄຈດ້ານຈັນຍາບັນວິຊາຊີບບັນຊີທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າ

ໂດຍລວມແລ້ວມີລະດັບສິ່ງຜົນຕໍ່ການເຮັດບັນຊີ ໃຫ້ມີປະສິດທິພາບຢູ່ລະດັບຫຼາຍທີ່ສຸດ ເຊິ່ງລະດັບທີ່ສິ່ງຜົນຫຼາຍກ່ວາໝູ່ໄດ້ແກ່ ມີຄວາມຕັ້ງໃຈໃນການປະຕິບັດວຽກງານຢ່າງຊື່ສັດສຸດຈະລິດ, ຮອງລົງມາແມ່ນ ມີຄວາມຮັບຜິດຊອບ ແລະ ຮັກສາຄວາມລັບຂອງອົງກອນ ແລະ ລະດັບທີ່ສິ່ງຜົນໜ້ອຍທີ່ສຸດຄື ໄດ້ປະຕິບັດຕາມຂັ້ນຕອນໃນການກວດສອບເອກະສານຕ່າງໆກ່ອນເຮັດການເບີກຈ່າຍທຸກຄັ້ງ

❖ **ປັດໄຈດ້ານທັດສະນະຄະຕິໃນວິຊາຊີບບັນຊີ**

ໃນການວິເຄາະປັດໄຈດ້ານທັດສະນະຄະຕິໃນວິຊາຊີບບັນຊີທີ່ສິ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສິ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍທີ່ສຸດ ເຊິ່ງລະດັບທີ່ສິ່ງຜົນຫຼາຍກ່ວາໝູ່ໄດ້ແກ່ ມີຄວາມຕັ້ງໃຈຮຽນຮູ້ ແລະ ພັດທະນາຕົນເອງຢ່າງຕໍ່ເນື່ອງ ເພື່ອປະຕິບັດງານດ້ານການບັນຊີໃຫ້ມີປະ ສິດທິພາບ, ຮອງລົງມາແມ່ນ ມີຄວາມມຸ່ງຫມັ້ນໃນການປະຕິບັດວຽກງານບັນຊີໃຫ້ກັບອົງກອນ ແລະ ລະດັບທີ່ສິ່ງຜົນໜ້ອຍທີ່ສຸດຄື ມີການປະພຶດຕາມລະບຽບການຂອງຜູ້ປະກອບວິຊາຊີບບັນຊີເປັນຢ່າງດີ.

❖ **ປັດໄຈດ້ານການບໍລິຫານງານຂອງອົງກອນ**

ໃນການວິເຄາະປັດໄຈດ້ານການບໍລິຫານງານຂອງອົງກອນທີ່ສິ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສິ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍທີ່ສຸດ ເຊິ່ງລະດັບທີ່ສິ່ງຜົນຫຼາຍກ່ວາໝູ່ໄດ້ແກ່ ເມື່ອພົບບັນຫາທີ່ກໍ່ໃຫ້ເກີດຄວາມລົ້ມເຫຼວຕໍ່ການເຮັດບັນຊີ ອົງກອນສາມາດຄົ້ນຫາຂໍ້ຜິດພາດ ແລະ ກວດສອບໄດ້ຢ່າງໄວວາ, ຮອງລົງມາແມ່ນ ອົງກອນໄດ້ສົ່ງເສີມໃຫ້ພະນັກງານຍຶດຖື ແລະ ປະຕິບັດຕາມກົດລະບຽບ, ຂໍ້ບັງຄັບ ຂອງອົງກອນຢ່າງສະໝໍ່າສະເໝີ ແລະ ລະດັບທີ່ສິ່ງຜົນໜ້ອຍທີ່ສຸດຄື ອົງກອນໄດ້ມີການຈັດສັນລະບົບຂໍ້ມູນ ແລະ ນໍາຂໍ້ມູນມາໃຊ້ໃນການຈັດເຮັດບົດລາຍງານທາງບັນຊີເພື່ອບໍລິຫານການດໍາເນີນງານປະຈໍາວັນແລະມີການຈັດຊ່ອງທາງການຕິດຕໍ່ສື່ສານ ພາຍໃນໜ່ວຍງານ-ໜ່ວຍງານ ຫຼືໜ່ວຍງານ-ພາກສ່ວນພາຍນອກ ໄດ້ວ່ອງໄວ, ທັນເວລາ ແລະ ມີປະສິດທິພາບເຊິ່ງມີຄ່າໜ້ອຍທີ່ສຸດເທົ່າກັນ.

❖ **ປັດໄຈດ້ານປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີ**

ໃນການວິເຄາະປັດໄຈດ້ານປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີ ໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ພົບວ່າໂດຍລວມແລ້ວມີລະດັບສິ່ງຜົນຕໍ່ການເຮັດບັນຊີໃຫ້ມີປະສິດທິພາບຢູ່ລະດັບຫຼາຍ ເຊິ່ງລະດັບທີ່ສິ່ງຜົນຫຼາຍກ່ວາໝູ່ໄດ້ແກ່ ສາມາດສະໜອງເອກະສານລາຍງານການເງິນ ເພື່ອໃຫ້ຜູ້ໃຊ້ສາມາດຕັດສິນໃຈຕາມວັດຖຸປະສົງທີ່ແຕກຕ່າງກັນໄດ້, ຮອງລົງມາແມ່ນ ສາມາດສ້າງຂໍ້ມູນໃນເອກະສານລາຍງານການເງິນໄດ້ຢ່າງຖືກຕ້ອງຄົບຖ້ວນ ແລະ ລະດັບທີ່ສິ່ງຜົນໜ້ອຍທີ່ສຸດຄືສາມາດສະໜອງເອກະສານລາຍງານການເງິນເພື່ອຜູ້ບໍລິຫານໃນການຕັດສິນໃຈຕໍ່ກັບການບໍລິຫານທຸລະກິດໄດ້.

## V. ສະຫຼຸບ ແລະ ຂໍ້ສະເໜີ

ການສຶກສາໃນຄັ້ງນີ້ເປັນການສຶກສາກ່ຽວກັບປັດໄຈທີ່ສິ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງຄື:

- ເພື່ອສຶກສາປັດໄຈສ່ວນບຸກຄົນທີ່ສິ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ.

- ເພື່ອສຶກສາລະດັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການເຮັດບັນຊີຂອງພະນັກງານບັນຊີໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ.

ຈາກການສຶກສາປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີ ໃນບັນດາທະນາຄານທຸລະກິດ ໃນນະຄອນຫຼວງວຽງຈັນ ໂດຍສຶກສາໃນຮູບແບບປະລິມານເປັນຫຼັກ ຈາກກຸ່ມຕົວຢ່າງແມ່ນພະນັກງານບັນຊີໃນບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ຈຳນວນ 15 ທະນາຄານໂດຍນຳໃຊ້ການວິເຄາະຂໍ້ມູນດ້ວຍໂປຣແກມ SPSS ເປັນເຄື່ອງມືທີ່ຊ່ວຍໃນການວິເຄາະຂໍ້ມູນຢ່າງລະອຽດເຊັ່ນ: ຈຳນວນຂອງຄວາມຖີ່ (Frequencies), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation) ເຊິ່ງສາມາດສະຫຼຸບຜົນການສຶກສາໄດ້ດັ່ງນີ້:

ຈາກການສຶກສາຂໍ້ມູນຈາກແບບສອບຖາມ ຈຳນວນ 110 ຕົວຢ່າງ ໂດຍລວມແລ້ວພົບວ່າ ປະຊາກອນກຸ່ມຕົວຢ່າງຜູ້ຕອບແບບສອບຖາມສ່ວນໃຫຍ່ເປັນເພດຊາຍກວມເອົາ 60.9 ສ່ວນຮ້ອຍ, ມີອາຍຸລະຫວ່າງ 31-40 ປີ ແມ່ນກວມເອົາຈຳນວນ 53.6 ສ່ວນຮ້ອຍ, ໂດຍສ່ວນໃຫຍ່ມີລະດັບການສຶກສາປະລິນຍາຕີ ກວມເອົາ 75.5 ສ່ວນຮ້ອຍ, ຈົບການສຶກສາຈາກສາຂາການບັນຊີກວມເອົາ 30 ສ່ວນຮ້ອຍເຊິ່ງເປັນຈຳນວນຫຼາຍທີ່ສຸດຂອງກຸ່ມຕົວຢ່າງ, ໄລຍະເວລາເຮັດວຽກ 7 ປີຂຶ້ນໄປ ກວມເອົາ 57.3 ສ່ວນຮ້ອຍ, ຜູ້ຕອບແບບສອບຖາມສ່ວນໃຫຍ່ມີລາຍໄດ້ສະເລ່ຍຕໍ່ເດືອນ 5-10 ລ້ານກີບ ກວມເອົາ 44.5 ສ່ວນຮ້ອຍ, ເຊິ່ງພະນັກງານບັນຊີສ່ວນໃຫຍ່ຍັງບໍ່ໄດ້ຮຽນຫຼັກສູດ CPA ( Certificate Public Accountant) ກວມເອົາ 81.8 ສ່ວນຮ້ອຍ ແລະ ຜູ້ຕອບແບບສອບຖາມສ່ວນໃຫຍ່ມາຈາກ ທະນາຄານການຄ້າພັດທະນາລາວ ຈຳກັດ ກວມເອົາ 23.6 ສ່ວນຮ້ອຍ, ຈຳນວນມື້ເຮັດວຽກ 5 ມື້ ກວມເອົາ 90.0 ສ່ວນຮ້ອຍ, ຈຳນວນຊົ່ວໂມງເຮັດວຽກຕໍ່ກວ່າ 48 ຊົ່ວໂມງ ກວມເອົາ 69.1 ສ່ວນຮ້ອຍ, ແລະ ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນບໍ່ເຄີຍເຮັດວຽກຢູ່ບ່ອນອື່ນມາກ່ອນທີ່ຈະເຂົ້າເຮັດວຽກເປັນພະນັກງານບັນຊີໃນບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ກວມເອົາ 63.6 ສ່ວນຮ້ອຍ.

ຈາກຜົນການສຶກສາເຫັນໄດ້ວ່າ: ໃນການວິເຄາະລະດັບປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຂອງພະນັກງານບັນຊີບັນດາທະນາຄານທຸລະກິດໃນນະຄອນຫຼວງວຽງຈັນ ໂດຍນຳໃຊ້ຄ່າສະເລ່ຍໃນການວິເຄາະຂໍ້ມູນ ທາງດ້ານຄວາມຮູ້ໃນວິຊາຊີບບັນຊີ, ທັກສະທາງວິຊາຊີບບັນຊີ, ຈັນຍາບັນວິຊາຊີບບັນຊີ, ທັດສະນະຄະຕິໃນວິຊາຊີບບັນຊີ, ການບໍລິຫານງານຂອງອົງກອນ, ແລະ ປະສິດທິພາບໃນການໃນການເຮັດບັນຊີ ແລະ ເຫັນໄດ້ວ່າມີລະດັບທີ່ສົ່ງຜົນຕໍ່ປະສິດທິພາບໃນການເຮັດບັນຊີຫຼາຍ ເຊິ່ງປັດໄຈທີ່ມີລະດັບທີ່ສົ່ງຜົນໃນການເຮັດບັນຊີໃຫ້ມີປະສິດທິພາບຫຼາຍກວ່າໝູ່ໄດ້ແກ່ ປັດໄຈດ້ານຈັນຍາບັນວິຊາຊີບບັນຊີ, ຮອງລົງມາແມ່ນດ້ານ ການບໍລິຫານງານຂອງອົງກອນ, ທັດສະນະຄະຕິໃນວິຊາຊີບບັນຊີ,ດ້ານຄວາມຮູ້ໃນວິຊາຊີບບັນຊີ, ດ້ານທັກສະທາງວິຊາຊີບບັນຊີ ແລະ ປັດໄຈທີ່ມີຜົນໜ້ອຍສຸດຄື ປະສິດທິພາບໃນການໃນການເຮັດບັນຊີ

**ເອກະສານອ້າງອີງ**


- ແຄດທະລີຢາ ວັນວົງ (2021) ປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການປະຕິບັດງານຂອງນັກບັນຊີໃນກຸງເທບມະຫານະຄອນ. *ມະຫາວິທະຍາໄລສີປະທຸມ. ອີເມວ:* fai.kattreeya555@gmail.com

Kattreeya Wanwong (2021) FACTORS AFFECTING THE

PERFORMANCE OF ACCOUNTS IN BANGKO *.Sripatum University ,Thailand E-mail: fai.kattreeya555@gmail.com*

- ຈຸລາລັດ ສັດໄທ (2020) ປະສິດທິພາບໃນການປະຕິບັດງານບໍລິສັດເອກະຊົນໃນກຸງເທບມະຫານະຄອນ. *ສາຂາການບັນຊີ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລລາມຄຳແຫງ.*

Jularat Chatthai (2020) EFFICIENCY IN PERFORMANCE OF PRIVATE COMPANY ACCOUNT IN BANGKOK. *Faculty of Business Adminstration Program in Accounting Ramkhamhaeng University*

- ສິລິຂວັນ ຜົນວິຈິດ (2019) ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງເຈົ້າໜ້າທີ່ຝ່າຍການເງິນ-ການບັນຊີ ໜ່ວຍງານລາຊະການ ເຂດພື້ນທີ່ກຸງເທບມະຫານະຄອນ. *ບົດນິພົນນີ້ເປັນສ່ວນໜຶ່ງໃນການສຶກສາຕາມຫຼັກສູດບັນຊີຫຼັງປະລິນຍາຕີ ສາຂາວິຊາການບັນຊີ ວິທະຍາໄລບໍລິຫານທຸລະກິດ ວັດຕະກຳ ແລະ ການບັນຊີ ມະຫາວິທະຍາໄລທຸລະກິດບັນທິດ*

SiriKwan Phonwijit ( 2019) Factors affecting work Efficiency of Financial and Accounting officer, Government agency in Bang Kok area. *A thematic paper Submitted in Partial fulfillment of the Requirements for the Degree of Accountancy Program College of Innovative Business and Accountancy, Dhurakij Pundit University*

- ວັນລົບ ວັນນະໂອສົດ (2018) ປັດໄຈທີ່ສົ່ງຜົນຕໍ່ປະສິດທິພາບການປະຕິບັດງານຂອງນັກບັນຊີເອກະຊົນໃນເຂດກຸງເທບມະຫານະຄອນ. *ສະບັບພາສາໄທ ສາຂາມະນຸດສາດ ສັງຄົມສາດ ແລະ ສິລະປະ ປີທີ່ 11 ສະບັບທີ່ 1 ເດືອນມັງກອນ-ເມສາ (2018)*

Wanlop Wannaosote (2018) The Factors in Work Affecting to Performance Efficiency of Accountant in Private Company in Bangkok Metropolitan. *Veridian E-Journal, Silpakorn University ISSN 1906 – 3431*